ຮິບໂຮມຜົນງານບົດຂຽນ

# ກ. ອໍລະບູນ ກັບວຽກງານ ການເມືອງ ແນວຄິດ ແລະ ວັດທະນະທຳ

ສະຫງວນລິຂະສິດ

ກະຊວງຖະແຫລງຂ່າວ ແລະ ວັດທະນະທຳ

2010

ດວງເດືອນ ບຸນຍາວົງ

19. ມິຖຸນາ 2010

ກ. ອໍລະບູນ
ກົບວຽກງານການເມືອງ ແນວຄິດ
ແລະ ວັດທະນະທຳ

ຮັບຜິດຊອບການພິມ:   ຫງຸງວນ ຢູຍ ຮຸ່ງ

ຮັບຜິດຊອບເນື້ອໃນ:   ວີວັນ ຈັນທະໂຄດ

ອຸປະຖຳໂດຍ: ສຳນັກພິມ ການເມືອງ ແຫ່ງຊາດ ຫວຽດນາມ

# ກ. ອໍລະບູນ
# ກັບວຽກງານການເມືອງ ແນວຄິດ
# ແລະ ວັດທະນະທຳ

ຮີບໂຮມຜົນງານບົດຂຽນ: "ກ. ອໍລະບູນ" ກັບວຽກງານການເມືອງ ແນວຄິດ ແລະ ວັດທະນະທຳ
ຜູ້ຮີບໂຮມ ບັນນາທິການ ແລະ ຈັດພິມ: **ທອງໃບ ໂພທິສານ**
ຄະນະຊ່ວຍວຽກການຈັດທຳ:
**ທອງເດືອນ ທຳມະວົງ, ນາງ ພອນສະຫວັນ ໂພທິສານ, ນາງ ໄພວັນ ທຸມມາວົງ ແລະ ທ. ພູໂຂງ ພົມມະສອນ**
ຈັດໜ້າ ແລະ ອອກແບບໂດຍ: ບໍລິສັດ ບລູກຣາສ໌ ດີຊາຍ ກຣຸບ ຈຳກັດ
ພິມທີ່: **ໂຮງພິມແຫ່ງລັດ**
ອະນຸຍາດທະບຽນພິມ ເລກທີ: **88/ພຈ 17062008**
ພິມຄັ້ງທີ 1, ປີ 2008, ຈຳນວນພິມ 1.000 ຫົວ (ສະຫງວນລິຂະສິດ)

ອຸປະຖຳການພິມໂດຍ: ທ່ານ ນາງ ໂກສີ ພູມສະຫວັນ, ທ່ານ ນາງ ໂພສີ ໄຊຍະສອນ ແລະ

Dao-Heuang Group BLUE GRASS SENGDARA fitness & recreation LA Media INDEE RECORDS

# ສາລະບານ


ຄຳນຳຂອງຜູ້ຊ່ວຍຮີບໂຮມ ແລະ ຈັດພິມ

ຄຳເຫັນຂອງ ທ່ານ ດຣ. ບົວຈັນ ເພັງສະຫວັດ

ຄຳເຫັນຂອງ ທ່ານ ດຣ. ທອງຄຳ ອ່ອນມະນີສອນ

1. ຄວາມໝາຍປະຫວັດສາດຂອງການປະຕິວັດເດືອນສິງຫາ ....... 1
2. ບົດບາດຂອງກົດໝາຍສັງຄົມນິຍົມໃນການຄຸ້ມຄອງລັດ, ເສດຖະກິດ-ສັງຄົມ ....... 7
3. ກໍ່ສ້າງຖັນແຖວພະນັກງານ-ສະມາຊິກພັກເຂັ້ມແຂງ ເພື່ອປະຕິບັດ ບັນດາມະຕິຂອງພັກຢ່າງມີໄຊ ....... 17
4. ປ່ຽນແປງໃໝ່ຈິນຕະນາການ ແມ່ນຄວາມຄວາມຈຳເປັນພາວະວິໄສ ....... 29
5. ນະໂຍບາຍເສດຖະກິດໃໝ່ຂອງເລນິນ ແລະ ການແກ້ໄຂ ບັນຫາເສດຖະກິດປະເທດເຮົາປັດຈຸບັນ ....... 49
6. ວາລະສານ "ອະລຸນໃໝ່" ໃນຂະບວນການປ່ຽນແປງໃໝ່ ....... 77
7. ບັນຫາການຮັບຮູ້ລັດທິສັງຄົມນິຍົມຄືນໃໝ່ ....... 83
8. ການຂະຫຍາຍຕົວຂອງສັງຄົມໃນຍຸກສະໄໝປັດຈຸບັນ ....... 95
9. ເລີ່ມຈາກລະບອບປະຊາທິປະໄຕ ປະຊາຊົນ ຂຶ້ນສູ່ສັງຄົມນິຍົມເທື່ອລະກ້າວ ....... 101
10. ລັດທິສັງຄົມນິຍົມໃນປັດຈຸບັນ ແລະ ຄວາມອາດສາມາດ ....... 111
11. ບັນຫາລວມສູນປະຊາທິປະໄຕ ....... 119
12. ປ່ຽນແປງໃໝ່ລະບົບການເມືອງ ....... 123
13. ປະຊາທິປະໄຕແມ່ນແນວໃດ ....... 129
14. ລັດທິສັງຄົມປະຊາທິປະໄຕ ....... 135
15. ປ່ຽນແປງໃໝ່ວຽກງານພະນັກງານ ....... 141
16. ລັກສະນະພາວະວິໄສ ແລະ ວິທະຍາສາດຂອງວຽກງານແນວຄິດ ....... 149
17. ເພີ່ມທະວີບົດບາດນຳພາ ແລະ ກຳອຳນາດຂອງພັກ, ເພີ່ມທະວີ ຄວາມສາມາດຕ້ານການຖົດຖອຍ ແລະ ເສື່ອມຄຸນປ່ຽນທາດພາຍໃນພັກ. ....... 163
18. ບັນຫາພັກກຳອຳນາດ ....... 179
19. ສາຍພົວພັນແບບພິເສດ ແລະ ການຮ່ວມມືຮອບດ້ານລະຫວ່າງ ລາວ-ຫວຽດນາມ ແມ່ນບັນຫາທີ່ມີຄວາມໝາຍເປັນຕາຍ ຂອງສອງຊາດ ....... 195
20. ພະລັງຊຸກດັນຂອງການປະຕິວັດລາວ ....... 203
21. ຮັກສາວັດທະນະທຳ ກໍ່ແມ່ນຮັກສາຊາດ ....... 209

22. ວັດທະນະທຳ-ປັດໄຈສຳຄັນຂອງການພັດທະນາ........................................213
23. ການທ່ອງທ່ຽວກັບວັດທະນະທຳ........................................219
24. ສິ່ງທີ່ຄວນເອົາໃຈໃສ່ໃນການສ້າງວັດທະນະທຳໃໝ່........................................229
25. ການສືບທອດ ແລະ ພັດທະນາວັດທະນະທຳໃຫ້ທັນສະໄໝ........................................243
26. ວັດທະນະທຳກັບການພັດທະນາ........................................255
27. ສ້າງຄອບຄົວ ແລະ ບ້ານວັດທະນະທຳ ເພື່ອຄວາມຮັ່ງມີຜາສຸກ
ຂອງປະຊາຊົນ, ປະເທດຊາດເຂັ້ມແຂງ ແລະ ສັງຄົມສະເໝີພາບ
ປະຊາທິປະໄຕ ແລະ ສີວິໄລ........................................279
28. ຈະພັດທະນາອັນໃດກໍຕາ ຖ້າບໍ່ພັດທະນາຄຸນນະພາບຊີວິດ........................................285
29. ທຳວັດທະນະທຳ ຫລື ສູນວັດທະນະທຳ ອີງກອນ ຫລື ສະຖາບັນທາງ
ວັດທະນະທຳລະດັບຊາດ........................................289
30. ການຮັກສາວັດທະນະທຳ ຕ້ອງຮັກສາສາລະແກ່ນສານ........................................297
31. ປັດໄຈດ້ານວັດທະນະທຳໃນການພັດທະນາ........................................301
32. ການວິໄຈ ແລະ ວາງແຜນ ເພື່ອການພັດທະນາວັດທະນະທຳໃໝ່........................................307
33. ການສືບຕໍ່ຂອງວັດທະນະທຳ........................................315
34. ເພີ່ມທະວີການພັດທະນາວັດທະນະທຳ ແລະ ປັບປຸງກົນໄກວັດທະນະທຳ
ໃຫ້ສອດຄ່ອງ........................................319
35. ບັນຫາ "ການອະນຸລັກ" ສົ່ງເສີມເຜີຍແຜ່ ແລະ ພັດທະນາວັດທະນະທຳ........................................325
36. ບັນຫາທີ່ຕັດສິນໃນການຍົກສູງຄຸນນະພາບຂອງສື່ມວນຊົນ
ແມ່ນການກໍ່ສ້າງຖັນແຖວພະນັກງານສື່ ແລະ ຄຸ້ມຄອງສື່ມວນຊົນ........................................329
37. ບົດອວຍພອນໜັງສືພິມວັດທະນະທຳ ເນື່ອງໃນໂອກາດ
ບຸນປະເພນີປີໃໝ່ຂອງທວງດນາມ........................................335

# ຄຳນຳ

ໃນນາມຜູ້ຮີບໂຮມ ແລະ ເປັນຜູ້ຊ່ວຍບັນນາທິການ ຂ້າພະເຈົ້າ ຮູ້ສຶກຍິນດີ ແລະ ເປັນກຽດຢ່າງສູງ ທີ່ໄດ້ຮັບຄວາມໄວ້ວາງໃຈໃຫ້ຮີບໂຮມ ແລະ ຈັດພິມປຶ້ມຜົນງານບົດຂຽນ: " ກ. ອໍລະບູນ ກັບວຽກງານການເມືອງ ແນວຄິດ ແລະ ວັດທະນະທຳ".

ສ່ວນຕົວຜ່ານມາ ຂ້າພະເຈົ້າມີໂອກາດໄດ້ອ່ານ ແລະ ສຶກສາຄົ້ນຄວ້າ ບົດຂຽນຂອງ ກ. ອໍລະບູນ ຢູ່ໃນວາລະສານ ໂດຍສະເພາະແມ່ນວາລະສານ "ອາລຸນໃໝ່" ແລະ ໜັງສືພິມສະບັບຕ່າງໆ ແລະ ໄດ້ຮ່ວມສົນທະນາ ແລກປ່ຽນຄຳຄິດຄຳເຫັນກັບເພິ່ນເອງ ໃນບາງໂອກາດ ເຊິ່ງກໍພາໃຫ້ໄດ້ຮັບທັງຄວາມຮູ້ເສີມສ້າງສະຕິປັນຍາ ທັງຊ່ວຍບຳລຸງລະດັບການເມືອງ ແນວຄິດ ທິດສະດີຂອງຕົນໃຫ້ສູງຂຶ້ນ, ເຮັດໃຫ້ເຂົ້າໃຈ ແລະ ກຳແໜ້ນແນວທາງນະໂຍບາຍຂອງພັກຢ່າງລະອຽດເລິກເຊິ່ງ ພ້ອມທັງສາມາດນຳເອົາໄປຈັດຕັ້ງຜັນຂະຫຍາຍເຂົ້າໃນວຽກງານວິຊາສະເພາະຢ່າງກວ້າງຂວາງ ຖືກຕ້ອງ ແທດເໝາະກັບພຶດຕິກຳຕົວຈິງຂອງສະພາບການໃນແຕ່ລະໄລຍະໄດ້ເປັນຢ່າງດີ. ບັນດາບົດຂຽນຕ່າງໆ ທີ່ຈັດພິມລົງໃນປຶ້ມເຫຼັ້ມນີ້ ແມ່ນໄດ້ທຳການຮີບໂຮມມາຈາກຫລາຍໆ ແຫລ່ງຂ່າວສານ ທີ່ໄດ້ລົງພິມບົດຂອງເພິ່ນໃນຕະຫລອດໄລຍະ 20 ກວ່າປີທີ່ຜ່ານມາ ເປັນຕົ້ນຈາກວາລະສານ "ອະລຸນໃໝ່", ວາລະສານວັນນະສິນ, ໜັງສືພິມປະຊາຊົນ ແລະ ບົດປາຖະກະຖາຂອງເພິ່ນເອງ ເຊິ່ງມາໃນປະຈຸບັນໄດ້ມີຜູ້ອ່ານນາກມາຍ ລວມທັງນັກຮຽນ ນັກສຶກສາ ແລະ ນັກຄົ້ນຄວ້າຫລາຍທ່ານ ຮຽກຮ້ອງສະເໜີຢາກໃຫ້ມີການທ້ອນໂຮມ ແລະ ຈັດພິມເປັນເຫຼັ້ມ. ສະນັ້ນ, ຂ້າພະເຈົ້າຈຶ່ງມີຄວາມເຊື່ອໝັ້ນວ່າ ປຶ້ມຮີບໂຮມຜົນງານການຂຽນຂອງ . ອໍລະບູນ ເຫລັ້ມນີ້ ຈະຊ່ວຍຕອບສະໜອງຈຸດປະສົງຄວາມຕ້ອງການໃຫ້ແກ່ບັນດາທ່ານ ສຳລັບການສຶກສາຄົ້ນຄວ້າຮ່ຳຮຽນ ເປັນແຫລ່ງຕອບສະໜອງຂໍ້ມູນຄວາມຮູ້ຂ່າວສານ ທາງດ້ານທິດສະດີການເມືອງ ແລະ ພຶດຕິກຳທີ່ສຳຄັນຈຳເປັນ ແລະ ມີປະໂຫຍດຢ່າງຫລວງຫລາຍຕໍ່ກັບຕົນເອງ ກໍຄືວຽກງານໃນແຕ່ລະຂະແໜງການ ບໍ່ວ່າຈະເປັນຖັນແຖວພະນັກງານ, ສະມາຊິກພັກ, ນັກວິຊາການ, ຕະຫລອດຮອດຄູອາຈານ ນັກຮຽນນັກສຶກສາ ນັກຄົ້ນຄວ້າ ປັນຍາຊົນ ແລະ ຜູ້ທີ່ມີຄວາມສົນໃຈທົ່ວໆ ໄປ.

ໂອກາດນີ້,ຂ້າພະເຈົ້າຂໍສະແດງຄວາມຂອບໃຈແລະຮູ້ບຸນຄຸນເປັນຢ່າງສູງມາຍັງທ່ານ ດຣ. ບົວຈັນ ເພັງສະຫວັດ, ບ.ກ ໃຫຍ່ ວາລະສານ “ອະລຸນໃຫມ່” ແລະ ທ່ານ ດຣ. ທອງຄຳ ອ່ອນມະນີສອນ, ອະດີດຫົວຫນ້າກົມວັນນະຄະດີ ແລະ ວັດທະນະທຳມະຫາຊົນ, ກະຊວງ ຖະແຫລງຂ່າວ ແລະ ວັດທະນະທຳ ທີ່ໄດ້ກະລຸນາຂຽນບົດຄຳເຫັນອັນມີຄ່າ ສ້າງສັນ ຈີບງາມ ໃຫ້ແກ່ປຶ້ມເຫຼັ້ມນີ້.

ຢ່າງໃດກໍດີ, ບູຮານວ່າ “ ສັດສີ່ຕີນຍັງຮູ້ພະລາດ ນັກປາດຍັງຮູ້ຫລົງຜິດ” ໂອກາດນີ້ ຂ້າພະເຈົ້າ ພ້ອມດ້ວຍທີມງານຄະນະຈັດທຳ ແລະ ຈັດພິມ ຕ້ອງຂໍອະໄພ ທີ່ອາດຈະຍັງມີບາງ ອັນຂາດຕົກບົກຜ່ອງ ຫລື ຜິດພາດ ໃນປຶ້ມເຫລັ້ມນີ້. ສະນັ້ນ ຈຶ່ງຫວັງວ່າ ຈະໄດ້ຮັບການຊ່ວຍ ເຫລືອສ້າງສັນ ຕຳນິຕິຊົມຈາກຜູ້ອ່ານ ນັກປາດອາຈານ ແລະ ຜູ້ຮູ້ທຸກໆ ທ່ານມານະທີ່ນີ້ດ້ວຍ.

ທອງໃບ ໂພທິສານ

## ຄຳເຫັນຂອງທ່ານ ດຣ. ບົວຈັນ ເພັງສະຫວັດ

ບັນນາທິການໃຫຍ່ວາລະສານ "ອາລຸນໃຫມ່"

ໃນນາມບັນນາທິການໃຫຍ່ວາລະສານ "ອາລຸນໃຫມ່" ແລະ ໃນນາມສ່ວນຕົວ ຂ້າພະເຈົ້າຂໍສະແດງຄວາມຊົມເຊີຍ ສະຫາຍ ຫມູນແກ້ວ ອໍລະບູນ ອະດີດບັນນາທິການໃຫຍ່ວາລະສານ"ອະລຸນໃຫມ່" ກຳມະການສູນກາງພັກ, ລັດຖະມົນຕີວ່າການ ກະຊວງຖະແຫລງຂ່າວ ແລະ ວັດທະນະທຳ ທີ່ໄດ້ມີ ຄວາມພາກພຽນອຸດສາຫະທຸ້ມເທມັນສະຫມອງ ພູມປັນຍາໃນການຄົ້ນຄິດ ແລະ ຂຽນບົດທີ່ເຕັມໄປດ້ວຍຄຸນຄ່າທາງດ້ານເນື້ອໃນອັນ ເລິກເຊິ່ງ ແລະ ມີຄຸນປະໂຫຍດຫລາຍທີ່ສຸດ ໃຫ້ແກ່ວຽກງານການໂຄສະນາອົບຮົມການເມືອງ-ແນວຄິດທິດສະດີ ກໍ່ຄືບົດຮຽນໃນການຈັດຕັ້ງ ຜັນຂະຫຍາຍແນວທາງນະໂຍບາຍຂອງພັກ ແລະ ແຜນພັດທະນາເສດຖະກິດ-ສັງຄົມ ຂອງລັດ

ບັນດາບົດຂຽນທີ່ເປັນຜົນງານຂອງສະຫາຍ ຫມູນແກ້ວ ອໍລະບູນ ກ່ຽວກັບການເມືອງ-ແນວຄິດ ແລະ ທິດສະດີຂອງພັກ ທີ່ໄດ້ຮັບໂຮມ ແລະ ຈັດພິມຢູ່ໃນປຶ້ມເຫລັ້ມນີ້ ແມ່ນໄດ້ລົງພິມໂຄສະນາເຜີຍແຜ່ຢູ່ໃນຫນ້າວາລະສານ "ອາລຸນໃຫມ່" ມາແລ້ວ ແຕ່ຊຸມປີ 1980 ເຊິ່ງແຕ່ລະບົດແມ່ນໄດ້ຮັບການ ຍົກຍ້ອງຊົມເຊີຍຈາກການນຳພັກ-ລັດ ກໍ່ຄືເພື່ອນຜູ້ອ່ານຢ່າງກວ້າງຂວາງມາຈົນ ເຖິງປະຈຸບັນ.

ໂດຍຜ່ານຈາກຄວາມຮູ້ທາງດ້ານທິດສະດີການເມືອງ ແລະ ປະສົບປະການ ໃນການເຄື່ອນໄຫວວຽກງານຕົວຈິງບົນເສັ້ນທາງຕໍ່ສູ້ປະຕິວັດທີ່ຍາວນານລະອິດລະອ້ຽວຂອງສະຫາຍຫມູນແກ້ວ ອໍລະບູນ ໄດ້ເຮັດໃຫ້ບົດຂຽນແຕ່ລະບົດມີເນື້ອໃນອຸດົມສົມບູນ ເລິກເຊິ່ງ ຫນັກແຫນ້ນ ແລະ ຕິດແທດກັບພຶດຕິກຳຕົວຈິງ ບົນພື້ນຖານແນວທາງນະໂຍບາຍອັນຖືກຕ້ອງ ແລະ ສະຫລາດສ່ອງໃສຂອງພັກປະຊາຊົນ ປະຕິວັດລາວ, ສ່ອງແສງໃຫ້ເຫັນຂະບວນການຈັດຕັ້ງປະຕິບັດບັນດາມະຕິ ແນວທາງແຜນການວຽກງານດ້ານຕ່າງໆ ໃນແຕ່ລະໄລຍະປະຫວັດສາດຢ່າງກວ້າງຂວາງ, ສົ່ງເສີມສ້າງສັນ ຍົກຍ້ອງຊົມເຊີຍບັນດາຈຸດດີ ແລະ ຫມາກຜົນຂອງການປະຕິບັດແນວທາງຢ່າງຖືກຕ້ອງ. ພ້ອມດຽວກັນນັ້ນ ຜູ້ຂຽນກໍ່ກ້າຕຳນິສ່ອງແສງບັນດາຈຸດອ່ອນຂໍ້ຜິດພາດ ຂໍ້ບົກຜ່ອງ ຫລື ຈຸດທີ່ຍັງຄົງຄ້າງ ພ້ອມທັງຊີ້ທິດເຍືອງທາງໃຫ້ເຫັນວິທີການ ແລະ ມາດຕະການໃນການປັບປຸງແກ້ໄຂ ເພື່ອປ່ຽນແປງໃຫມ່ຢ່າງຈະແຈ້ງ ສົມເຫດສົມຜົນ ແລະ ແທດເຫມາະກັບສະພາວະຄວາມເປັນຈິງແຫ່ງຍຸກສະໄຫມ. ສະນັ້ນ ຈຶ່ງສາມາດເວົ້າໄດ້ວ່າບົດຂຽນຂອງ. ອໍລະບູນທີ່ໄດ້ຮັບໂຮມ ແລະ ຈັດພິມຢູ່ໃນປຶ້ມເຫຼັ້ມນີ້ ເປັນເອກະສານການເມືອງແນວຄິດ ແລະ ທິດສະດີທີ່ມີຄຸນຄ່າສູງສຳລັບການ ສຶກສາຄົ້ນຄວ້າ ເພື່ອເປັນບົດຮຽນໃນ ການ

ຈັດຕັ້ງນຳພາຂອງບັນດາສະຫາຍສະມາຊິກພັກ ແລະ ພະນັກງານຫລັກແຫລ່ງ ໃນແຕ່ລະຂົງເຂດວຽກງານ ກໍຄືການໂຄສະນາສຶກສາອົບຮົມ ເພື່ອສ້າງຄວາມໜັກແໜ້ນເຂັ້ມແຂງທາງດ້ານຄຸນທາດການເມືອງ ສະຕິຕໍ່ການຈັດຕັ້ງ ລະບຽບວິໄນ ພ້ອມທັງຊຸກຍູ້ການຈັດຕັ້ງຜັນຂະຫຍາຍບັນດາແນວທາງຂອງພັກ ໃຫ້ຖືກຕ້ອງ ປະດິດສ້າງ ແລະ ບັນລຸຜົນຕາມຈຸດປະສົງຄາດໝາຍຢ່າງແທ້ຈິງ.

ໂອກາດນີ້ ຂ້າພະເຈົ້າຂໍສະແດງຄວາມຊົມເຊີຍຄະນະຮັບຜິດຊອບ ຮິບໂຮມ ແລະ ຈັດພິມ ປຶ້ມເຫລັ້ມນີ້. ຫວັງເປັນຢ່າງຍິ່ງວ່າ ປຶ້ມ: ກ. ອໍລະບູນ ກັບວຽກງານການເມືອງ-ແນວຄິດ ແລະ ວັດທະນະທຳ ຈະເກີດປະໂຫຍດສູງສຸດໃຫ້ແກ່ເພື່ອນຜູ້ອ່ານໃນທົ່ວສັງຄົມ.

ດຣ. ບົວຈັນ ເພັງສະຫວັດ

## ຄຳເຫັນຂອງ ດຣ. ທອງຄຳ ອ່ອນມະນີສອນ

ອະດີດຫົວໜ້າກົມວັນນະຄະດີ ແລະ ວັດທະນະທຳມະຫາຊົນ

ກ່ອນອື່ນ, ຂ້າພະເຈົ້າຂໍສະແດງຄວາມຂອບໃຈ ແລະ ຮູ້ສຶກເປັນກຽດ ຢ່າງສູງ ທີ່ໄດ້ອ່ານຜົນງານບົດຂຽນຂອງ ທ່ານ ໜູນແກ້ວ ອໍລະບູນ ແລະ ປະກອບຄຳຄິດຄຳເຫັນເຂົ້າໃສ່ບົດຂຽນດັ່ງກ່າວ ທີ່ໄດ້ຮັບການຮຽບໂຮມ ແລະ ຈັດພິມຢູ່ໃນປຶ້ມ: "ກ. ອໍລະບູນ ກັບວຽກງານການເມືອງ ແນວຄິດ ແລະ ວັດທະນະທຳ" ເຫຼັ້ມນີ້.

ບົດຂຽນກ່ຽວກັບວຽກງານວັດທະນະທຳຂອງ ກ. ອໍລະບູນ ຖືໄດ້ວ່າ ເປັນເອກະສານວິຊາການທາງດ້ານວັດທະນະທຳທີ່ດີທີ່ສຸດ ເຊິ່ງປະຈຸບັນແມ່ນຫາຍາກທີ່ຈະມີຄົນຂຽນຂຶ້ນໄດ້ຢ່າງລະອຽດຄົບຖ້ວນຄືແນວນີ້. ໃນດ້ານທິດສະດີວິຊາການວັດທະນະທຳແລ້ວ ຂ້າພະເຈົ້າສາມາດຢັ້ງຢືນໄດ້ວ່າ ເປັນບົດຂຽນທີ່ລ້ຳເລີດ ໂດດເດັ່ນ ເພາະມັນສະທ້ອນໃຫ້ເຫັນຢ່າງຊັດເຈນທິດສະດີ ອັນຈຳເພາະພຶດຕິກຳທີ່ແທ້ຈິງ ແລະ ບົດຮຽນອັນສູງຄ່າຂອງໂລກ ກໍຄືຂອງພາກພື້ນ ແລະ ຂອງລາວເຮົາເອງ.

ໂຄງຮ່າງບົດຂຽນມີລັກສະນະວິທະຍາສາດ ເຊື່ອມໂຍງບັນຫາເນື້ອໃນ ແລະ ລະບົບວິທີປະຕິບັດເຂົ້າໃສ່ກັນເປັນລຳດັບຢ່າງແໜບແໜ້ນ ສົມເຫດສົມຜົນ, ເຮັດໃຫ້ຜູ້ອ່ານເຂົ້າໃຈແຈ້ງເຖິງຂັ້ນຕອນຂອງບັນຫາວິທີແກ້ໄຂ ແລະ ການຈັດຕັ້ງປະຕິບັດໃນການພັດທະນາວັດທະນະທຳ ໃນເງື່ອນໄຂຄວາມກ້າວໜ້າ ແລະ ທັນສະໄໝຂອງວິທະຍາສາດ ເທັກໂນໂລຊີຢູ່ລາວເຮົາ. ຂ້າພະເຈົ້າຂໍມີບາງຄຳເຫັນໃນຖານະນັກວິຊາການ ຕໍ່ກັບບາງບົດຂຽນຂອງເພິ່ນດັ່ງນີ້:

ກ່ຽວກັບບົດ: ບັນຫາການອະນຸລັກສົ່ງເສີມເຜີຍແຜ່ ແລະ ພັດທະນາວັດທະນະທຳລາວ, ເປັນບົດວິຊາການທີ່ຜູ້ຂຽນໄດ້ຊີ້ໃຫ້ເຫັນບັນຫາຕົ້ນຕໍ ແລະ ອັນພື້ນຖານທີ່ຈຳເປັນ ແລະ ຮີບດ່ວນ. ໃນນີ້ ເພິ່ນໄດ້ໃຫ້ວິທີການແກ້ບັນຫາຕ່າງໆ ໄວ້ຢ່າງຮັດກຸມມີລັກສະນະວິທະຍາສາດ ແລະ ແທດເໝາະກັບຍຸກສະໄໝ, ສາມາດນຳໄປໃຊ້ເປັນຫຼັກໃນການປະຕິບັດໜ້າທີ່ວຽກງານໄດ້ຢ່າງໂລ່ງອົກໂລ່ງໃຈໂລດ. ເຊັ່ນດຽວກັບບົດ: ຫໍວັດທະນະທຳ ຫຼື ສູນວັດທະນະທຳອົງກອນ ຫຼື ສະຖາບັນທາງວັດທະນະທຳລະດັບຊາດ, ສາມາດເປັນບົດວິຊາການ ເປັນເອກະສານຫຼັກ ແລະ ວິຊາສະເພາະກ່ຽວກັບຫໍວັດທະນະທຳ ແລະ ສູນວັດທະນະທຳ ເຊິ່ງເພິ່ນໄດ້ໃຫ້ຄຳນິຍາມໄວ້ຢ່າງຊັດເຈນ, ບອກໃຫ້ຮູ້ຢ່າງ ພາວະວິໄສ ເຖິງໜ້າທີ່ບົດບາດ ແລະ ການນຳໃຊ້ຢ່າງມີປະສິດທິພາບ ຜູ້ຂຽນໄດ້ເນັ້ນໜັກເຖິງວັດຖຸປະສົງການຈັດຕັ້ງເຄື່ອນໄຫວຢ່າງມີຫົວຄິດປະດິດສ້າງ ທັງໃນລະດັບຊາດ ແລະ ລະດັບສາກົນ ເປັນຂໍ້ມູນວິຊາການທີ່ບໍ່ເຄີຍມີ

ມາກ່ອນ ແລະ ກໍບໍ່ເຄີຍເຫັນໃຜຄິດຄົ້ນນຳສະເໜີຮູບແບບທີ່ມີລັກສະນະວິທະຍາສາດແທດເໝາະກັບພາລະບົດບາດ ແລະ ໜ້າທີ່ຂອງສະຖາບັນນີ້ມາກ່ອນເລີຍ. ດັ່ງນັ້ນ ຄວນຖືເອົາເປັນເອກະສານຂໍ້ມູນວິຊາການ ເປັນຄູ່ມືແມ່ແບບ ແລະ ຫລັກນຳພາໃນການຈັດຕັ້ງປະຕິບັດເພື່ອພັດທະນາສົ່ງເສີມວຽກງານ ຫໍວັດທະນະທຳ ແລະ ສູນວັດທະນະທຳຕໍ່ໄປ.

ສຳລັບບົດ: ການສືບທອດ ແລະ ພັດທະນາວັດທະນະທຳໃຫ້ທັນສະໄໝ, ເປັນບົດປັດຊະຍາທາງດ້ານວັດທະນະທຳ ເພິ່ນໄດ້ໃຊ້ວິຈາລະນະຍານ ອັນລ້ຳເລີກ ໃຊ້ສະຕິປັນຍາອັນສະຫລາດສະຫລຽວໃນການເບິ່ງບັນຫາ ແລະ ຂະບວນວິວັດແຫ່ງວັດທະນະທຳ ເຊິ່ງເຊື່ອມໂຍງອະດີດ ປະຈຸບັນ ອານະຄົດ ໄດ້ຢ່າງກົມກືນ ແລະ ສັດຈະວິພາກ. ຜູ້ຂຽນໄດ້ວິເຄາະ ວິຈານໃຫ້ເຫດຜົນ ກ່ຽວກັບວັດທະນະທຳພຸດທະກະເສດ ວິກິດການທາງດ້ານສັງຄົມ, ເສດຖະກິດທຳມະຊາດ ສິ່ງແວດລ້ອມ ແລະ ມະນຸດ, ຊີ້ໃຫ້ເຫັນໄພອັນຕະລາຍອັນຮ້າຍແຮງທີ່ໄດ້ເກີດຂຶ້ນພວມເກີດຂຶ້ນ ແລະຈະເກີດຂຶ້ນໃນອະນາຄົດຕໍ່ກັບ ວັດທະນະທຳລາວ ກໍຄືວັດທະນະທຳສາກົນພາຍໃຕ້ກະແສແຫ່ງຄວາມບີບຄັ້ນກົດດັນຂອງຍຸກໂລກາພິວັດ ເສດຖະກິດທຶນນິຍົມເສລີ ຫລືອະພິມະຫາອຳນາດທາງດ້ານເສດຖະກິດ ທີ່ປົກຄອງທົ່ວພິພົບ. ຜູ້ຂຽນມີວິໄສທັດເບິ່ງກວ້າງແນມໄກ ໄດ້ສະເໜີວິກິດການທາງດ້ານວັດທະນະທຳ ທີ່ເປັນບັນຫາອັນຮີບດ່ວນ ເຄັ່ງຮ້ອນ ແລະ ຕ້ອງການຄຳຕອບຈາກພະລັງລວມສູນ ສະຕິປັນຍາ ວິຊາການ ແລະ ສຽງເວົ້າຂອງທົ່ວໃຈຂອງຄົນຮັກຊາດ ຮັກວັດທະນະທຳ ຮັກຄວາມເປັນມະນຸດ ແລະ ຄວາມມີອະລິຍະທຳອັນສີວິໄລຂອງໂລກ ພ້ອມທັງສັງລວມຈຸດສຸມລວມສູນແຫ່ງມະຫັນຕະໄພທີ່ໄດ້ເກີດຂຶ້ນ ພວມເກີດຂຶ້ນ ແລະ ຈະເກີດຂຶ້ນໃນອະນາຄົດຢ່າງບໍ່ຢຸດຢັ້ງ ເຊິ່ງຈະເປັນການທຳລາຍຄວາມບໍລິສຸດວິນຍານ ແລະ ຄວາມສະອາດສົດໃສຂອງວັດທະນະທຳ ຢູ່ທຸກບ່ອນທຸກທີ່ໃນໂລກ. ດັ່ງນັ້ນເພື່ອແກ້ໄຂບັນຫາຕ່າງໆດັ່ງກ່າວຜູ້ຂຽນໄດ້ສະແດງວິໄສທັດຢ່າງສະຫລາດສະຫລຽວ ໃນການສຶກສາພິຈາລະນາຄົ້ນຄວ້າ ແລະ ວິໄຈ ຊອກທຸກທາງອອກອັນຖືກຕ້ອງເໝາະສົມ ເຊິ່ງເຫັນວ່າແທດເໝາະ ແລະ ສອດຄ່ອງກັບຄວາມຈິງພາວະວິໄສຂອງຊາດເຮົາ ແລະ ຂອງສາກົນ.

ຂ້າພະເຈົ້າຂໍສະແດງຄວາມຊົມເຊີຍຢ່າງຈິງອົກຈິງໃຈ ຕໍ່ຄວາມບາກບັ່ນພະຍາຍາມຂອງ ທ່ານ ໜູນແກ້ວ ອໍລະບູນ ລັດຖະມົນຕີວ່າການ ກະຊວງຖະແຫລງຂ່າວ ແລະ ວັດທະນະທຳ ໃນການຄົ້ນຄວ້າ ຄົ້ນຄິດ ແລະ ຂີດຂຽນບົດ ທີ່ມີເນື້ອໃນເລິກເຊິ່ງ ມີຄຸນປະໂຫຍດ ແລະຄຸນຄ່າມາກມາຍທາງດ້ານວິຊາການ ວັດທະນະທຳ ແລະ ສະຕິປັນຍາ. ບົດເຫລົ່ານີ້ຈະກາຍເປັນບົດວິຊາການ ສຳຄັນທີ່ສຸດສຳລັບສ່ອງແສງສະຫວ່າງຊີ້ນຳ ນຳພາແນວຄິດ ແລະ ພຶດຕິກຳ

ຂອງພະນັກງານວັດທະນະທຳ ແລະ ຄົນລາວທຸກຄົນ. ນອກຈາກນີ້ ຍັງຈະເປັນປຶ້ມແມ່ແບບຄູ່ມືສຳລັບໃຊ້ເຂົ້າກັບວຽກງານຕົວຈິງໃນການປະຕິບັດໂຄງການພັດທະນາວັດທະນະທຳໃນດ້ານຕ່າງໆ ໃຫ້ດຳເນີນໄປຢ່າງຖືກທິດຖືກທາງ ຕາມແບບວິທີວິຊາການ ແລະ ການປ່ຽນແປງໃຫມ່ຂອງພັກ. ດັ່ງນັ້ນ, ຈຶ່ງຄວນແກ່ການຈັດພິມເຜີຍແຜ່ໃຫ້ແກ່ພະນັກງານນັກວິຊາການ ແລະ ຜູ້ທີ່ສົນໃຈ ເພື່ອຄົ້ນຄວ້າວິໃຈ ຈັດຕັ້ງສຳມະນາ ຊອກຫາພູມປັນຍາລວມຂອງທົ່ວສັງຄົມມາໄຂ ກຸນແຈບອກທາງແກ້ໄຂຮ່ວມກັນ ເພື່ອເຮັດໃຫ້ຊາດລາວ ຄົນລາວ ແລະ ວັດທະນະທຳລາວລອດພົ້ນຈາກມະຫັນຕະໄພແຫ່ງວິກິດການດັ່ງກ່າວມານັ້ນຢ່າງຈີບງາມ.

ດຣ. ທອງຄຳ ອ່ອນມະນີສອນ













# ຄວາມໝາຍປະຫວັດສາດຂອງການປະຕິວັດເດືອນສິງຫາ

ອະດີດ, ປະຈຸບັນ ແລະ ອະນາຄົດ ມັນຕິດພັນກັນແບບກາຍອິນຊີ ວານນີ້ ເຮັດໃຫ້ເຮົາເຂົ້າໃຈມື້ນີ້ ແລະ ມື້ນີ້ຊ່ຳພັດທະນາໃຫ້ມື້ຕໍ່ໆ ໄປ. ການທົບທວນມູນເຊື້ອປະຫວັດສາດອັນສະຫງ່າລາສີ ຂອງການປະຕິວັດ ເດືອນສິງຫາ 1945 ແລະ 1975 ນັ້ນ ມັນຈະຊ່ວຍໃຫ້ເຮົາເພີ່ມຄວາມເອກອ້າງທະນົງໃຈ ເຂົ້າໃຈອາດີດ ປະຈຸບັນ ຢ່າງເລິກເຊິ່ງຖືກຕ້ອງ ແລະ ມີຄວາມເຊື່ອໝັ້ນໃນອະນາຄົດ ຈາກນັ້ນມຸ່ງໜ້າເຂົ້າສູ່ສະໜາມຮົບໃໝ່, ອຸທິດໃໝ່ ແລະ ສ້າງມູນເຊື້ອອັນສະຫງ່າລາສີທີ່ສູງສົ່ງກວ່າເກົ່າເລື້ອຍໆ ໄປ.

ກ່ອນນີ້62ປີ ໂດຍສວຍເອົາກາລະໂອກາດທີ່ກອງທັບແດງໂຊວຽດຜາບແພ້ຊຸນເສິກຍີ່ປຸ່ນ ແລະ ການປະຕິວັດເດືອນສິງຫາ ຂອງປະຊາຊົນ ຫວຽດນາມສຳເລັດຜົນ ປະຊາຊົນລາວເຮົາລຸກຮື້ຂຶ້ນຕໍ່ສູ້ດ້ວຍອາວຸດ ຢຶດອຳນາດການປົກຄອງ ຂອງຍີ່ປຸ່ນ ແລະ ຝະລັ່ງໃນວັນທີ 23 ສິງຫາ ແລະ ປະກາດປະເທດລາວ ເປັນເອກະລາດໃນວັນທີ 12 ຕຸລາ 1945.

ການປະຕິວັດເດືອນສິງຫາ ແລະການປະກາດເອກະລາດ 12ຕຸລາ 1945ສຳເລັດຜົນມັນແມ່ນເທື່ອທຳອິດທີ່ປະຊາຊົນເຮົາໄດ້ກັບຄືນເປັນເຈົ້າປະເທດຊາດ ແລະເປັນເຈົ້າຊະຕາກຳຂອງຕົນ ພາຍຫລັງຕົກເປັນຂ້ອຍຂ້າ ແລະ ປະເທດຊາດ ຖືກຕັດແບ່ງເປັນເວລາ 100 ກວ່າປີ, ປະເທດລາວ ຈາກບ່ອນທີ່ບໍ່ມີຊື່ໃນແຜນທີ່ໂລກໃນເມື່ອກ່ອນ ໄດ້ກາຍມາເປັນຊາດໜຶ່ງ ທີ່ມີຊື່ສຽງໃນໂລກ ແລະ ໄຂເສັ້ນທາງກ້າວສູ່ສັງ ກາດໃໝ່ ສັງກາດແຫ່ງ ເອກະລາດ ເສລີພາບ ແລະ ສັງຄົມນິຍົມ ປະກອບສ່ວນເຮັດໃຫ້ລະບອບລ່າເມືອງຂຶ້ນແບບເກົ່າ ຂອງຈັກກະພັດເປື່ອຍເຍື່ອຍ ລົ້ມລະລາຍໃນຂອບເຂດທົ່ວໂລກ ແລະ ເປັນການປະກາດວ່າ ກາລະໂອກາດປົດປ່ອຍຕົນເອງຂອງບັນດາປະຊາຊາດທີ່ຖືກກົດຂີ່ໃນໂລກໄດ້ມາເຖິງແລ້ວ. ສະນັ້ນ ການປະຕິວັດເດືອນສິງຫາ ຂອງປະຊາຊົນລາວເຮົາມັນບໍ່ພຽງແຕ່ແມ່ນເພື່ອຊາດຂອງຕົນເອງເທົ່ານັ້ນຫາກຍັງເພື່ອສັນຕິພາບ ເອກະລາດ ປະຊາທິປະໄຕ ແລະ ຄວາມກ້າວໜ້າ ທາງສັງຄົມຂອງບັນດາປະຊາຊາດໃນໂລກອີກດ້ວຍ.

ເຖິງວ່າລັດຖະບານລາວເອກະລາດເວລານັ້ນ ໄດ້ຄົງຕົວຢູ່ພຽງແຕ່ໄລຍະບໍ່ພໍ 1 ປີ ແລະ ຈຳຕ້ອງໄດ້ຫລົບໄພໄປຢູ່ຕ່າງປະເທດຊົ່ວຄາວກໍຕາມ ແຕ່ມັນເປັນ ຂີດໝາຍແຫ່ງຄວາມ

ຕັດສິນໃຈຕໍ່ສູ້ອັນອົງອາດກ້າຫານ ບໍ່ຍອມຈຳນົນຂອງປະຊາຊົນເຮົາບັນດາເຜົ່າໃນຖານະ ຂອງຊາດໜຶ່ງມີນິເອກະລາດ ດັ່ງສະຫາຍ ເລຂາທິການໃຫຍ່ ໄກສອນ ພົມວິຫານ ໄດ້ເວົ້າວ່າ: **"ໄຊຊະນະນັ້ນໄດ້ເປີດສາກ ໃຫ້ແກ່ສະໄໝໃໝ່, ສະໄໝທີ່ປະຊາຊົນລາວເຮົາໄດ້ຮັບການປຸກລະດົມໃຫ້ຕື່ນຕົວເຂົ້າຮ່ວມການຕໍ່ສູ້ທີ່ເອົາເປັນເອົາຕາຍກັບສັດຕູ ເພື່ອກອບກູ້ເອົາປະເທດຊາດບ້ານເມືອງ"**(1)

ປະຫວັດສາດແຫ່ງການຕໍ່ສູ້ຂອງປະຊາຊົນລາວເຮົາໃນຫລາຍສິບປີຜ່ານມາ ໄດ້ຢັ້ງຢືນຄຳເວົ້າດັ່ງກ່າວຢ່າງຖືກຕ້ອງ. ຈາກການປະຕິວັດເດືອນສິງຫາ 1945 ປະຊາຊົນລາວບັນດາເຜົ່າພາຍໃຕ້ການນຳພາອັນສະຫລາດສ່ອງໃສຂອງພັກໄດ້ສືບຕໍ່ຕ້ານຈັກກະພັດໃຫຍ່ 2 ໂຕ ຄື: ຈັກກະພັດຝະລັ່ງ ແລະ ອາເມລິກາ ສືບຕໍ່ຍາດເອົາໄຊຊະນະທີ່ມີຄວາມໝາຍປະຫວັດສາດເລື້ອຍໆມາ. ວັນທີ 1 ມັງກອນ 1949 ກອງປະກອບອາວຸດປະຕິວັດທີ່ມີຊື່ວ່າ: "ກອງລາດຊະວົງ" ເຊິ່ງຕໍ່ມາແມ່ນກອງທັບປົດປ່ອຍປະຊາຊົນລາວ ແລະ ປະຈຸບັນແມ່ນກອງທັບປະຊາຊົນລາວໄດ້ຮັບການສ້າງຕັ້ງຂຶ້ນ, ໃນປີ 1950 ກອງປະຊຸມໃຫຍ່ແນວລາວອິດສະຫລະໄດ້ໄຂຂຶ້ນ ແລະວາງໂຄງການການເມືອງ 12 ຂໍ້ອອກ ສ້າງຕັ້ງແນວລາວອິດສະຫລະ ແລະ ລັດຖະບານລາວຕໍ່ຕ້ານ, ປີ 1954 ປະຊາຊົນເຮົາ ພ້ອມກັບ ປະຊາຊົນຫວຽດນາມ ແລະ ກຳປູເຈຍ ໄດ້ເຮັດໃຫ້ການຕໍ່ຕ້ານຈັກກະພັດຝະລັ່ງໃນໄລຍະ 9 ປີ ນັ້ນສິ້ນສຸດລົງດ້ວຍບັນຣິບຽນບຽນຟູປະຫວັດສາດ ແລະ ສັນຍາເຊີແນວກຽວກັບອິນດູຈີນ ໄດ້ຮັບການເຊັນສັນຍາບັງຄັບໃຫ້ຈັກກະພັດ ຝະລັ່ງຕ້ອງ ຍອມຮັບຮູ້ເອກະລາດ ອະທິປະໄຕ ແລະ ຜືນແຜ່ນດິນອັນຄົບຖ້ວນຂອງ 3 ຊາດອິນດູຈີນ; ຢູ່ລາວເຮົາພວກເຂົາໄດ້ຮັບຮູ້ຖານະຖືກກົດໝາຍ ຂອງບັນດາກຳລັງຮັກຊາດ ແລະ ເຂດເຕົ້າໂຮມ 2 ແຂວງຊຳເໜືອ, ຜົ້ງສາລີ ແລະ ເຮັດໃຫ້ແອກຄອບຄອງເປັນເວລາ 100 ກວ່າປີ ຂອງພວກລ່າເມືອງຂຶ້ນໃນ ປະເທດເຮົາ ໄດ້ສິ້ນສຸດລົງ.

ມາເຖິງປີ 1955 ພັກປະຊາຊົນປະຕິວັດລາວ ຜູ້ຈັດຕັ້ງນຳພາທຸກໄຊຊະນະຂອງການປະຕິວັດລາວໄດ້ສ້າງຕັ້ງຂຶ້ນ ເຊິ່ງເປັນບາດລ້ຽວປະຫວັດສາດອັນສຳຄັນສຳລັບ ການປະຕິວັດລາວ. ຈາກນັ້ນມາໃຕ້ການນຳພາໂດຍກົງຂອງພັກເຮົາ ໄດ້ຂະຫຍາຍຕົວຢ່າງກວ້າງຂວາງເຂດປົດປ່ອຍໄດ້ເປີດກວ້າງອອກຕິດລຽນກັນແຕ່ເໜືອເຖິງໃຕ້ ຕີໃຫ້ທຸກກຳລັງສົງຄາມຍຸດທະສາດ ທຸກເລລຽນ ແລະ ບັ້ນຮົບໃຫຍ່ນ້ອຍ ຂອງຈັກກະພັດອາເມລິກາ ປະລາໄຊຢ່າງລຽນ

1 *ໄກສອນ ພົມວິຫານ : 25 ປີ ແຫ່ງການຕໍ່ສູ້ ແລະ ໄຊຊະນະ ຂອງພັກປະຊາຊົນ ປະຕິວັດລາວ ພິຈຳໜ່າຍທີ່ ສ.ປ.ປ.ລາວ. ປີ 1980 ໜ້າ 13*

ຕິດບັງຄັບໃຫ້ຈັກກະພັດ ແລະ ລູກມືຂອງເຂົາຕ້ອງຍອມເຊັນສັນຍາໂຮມລາວ ແລະ ສ້າງຕັ້ງລັດຖະບານປະສົມຂອງລາວເຖິງ 3 ຄັ້ງ ໃນປີ 1957 ປີ 1961 ແລະ 1973 ເຊິ່ງເຫດການດັ່ງກ່າວມັນເຕັມໄປດ້ວຍຄວາມໝາຍປະຫວັດສາດອັນສຳຄັນແຫ່ງຂະບວນການປະຕິວັດ ຂອງປະຊາຊົນເຮົາ ພິເສດແມ່ນຄັ້ງທີ 3 ປີ 1973 ເຊິ່ງເປັນຄັ້ງສຸດ ທ້າຍແຫ່ງການກະກຽມໃຫ້ແກ່ການສຳເລັດການປະຕິວັດຊາດ ປະຊາທິປະໄຕ ພາຍຫລັງທີ່ລັດຖະບານປະສົມ ແລະ ຄະນະມົນຕີປະສົມການເມືອງແຫ່ງຊາດ ໄດ້ຮັບການສ້າງຕັ້ງຂຶ້ນກໍໄດ້ກຳນົດໂຄງການດຳເນີນງານ 10 ຂໍ້ ແລະ ໂຄງການ ການເມືອງ 18 ຂໍ້ ອັນເປັນພື້ນຖານ ບ່ອນອີງທາງກົດໝາຍໃຫ້ແກ່ປະຊາຊົນ ເຮົາລຸກຮື້ຂຶ້ນຍາດເອົາອຳນາດການປົກຄອງ ໂຄ່ນລົ້ມພວກປະຕິການຂາຍຊາດ ຂັບໄລ່ຈັກກະພັດອາເມລິກາອອກຈາກລາວ ແລະ ປົດປ່ອຍປະເທດຊາດຂອງຕົນຢ່າງສົມບູນ ດ້ວຍມະຕິຕົກລົງຂອງກົມການເມືອງສູນກາງພັກ ກ່ຽວກັບການລຸກຮື້ຂຶ້ນຢຶດອຳນາດດ້ວຍ 3 ບາດຄ້ອນຍຸດທະສາດທີ່ແມ່ນຢຳທີ່ສຸດ ມາເຖິງເດືອນພຶດສະພາ 1975 ປະຊາຊົນເຮົາໃນທົ່ວປະເທດລຸກຂຶ້ນຢຶດອຳນາດ ແຕ່ລະພາກສ່ວນ ແລະ ກ້າວຂຶ້ນຍຶດອຳນາດໃນທົ່ວປະເທດໃນວັນທີ 23 ສິງຫາ 1975 ຕໍ່ນັ້ນ ມາກອງປະຊຸມຜູ້ແທນປະຊາຊົນ ໄດ້ໄຂຂຶ້ນຢູ່ນະຄອນຫລວງວຽງຈັນ ໃນວັນທີ 1-2 ທັນວາ ປະກາດລົບລ້າງລະບອບລາຊາທິປະໄຕຢ່າງສິ້ນເຊີງ ຢຸດຕິການເປັນທີ່ວເມືອງຂຶ້ນຂອງຕ່າງປະເທດຢ່າງຖາວອນ ສະຖາປະນາ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໃນວັນທີ 2 ທັນວາ 1975 ແລ້ວນຳເອົາ ປະເທດຊາດກ້າວຂຶ້ນຕາມເສັ້ນທາງສັງຄົມນິຍົມຢ່າງສະຫງ່າຜ່າເຜີຍ.

ໄຊຊະນະອັນຍິ່ງໃຫຍ່ດັ່ງກ່າວນັ້ນ ແມ່ນໄຊຊະນະແຫ່ງແນວທາງປະຕິວັດອັນຖືກຕ້ອງ ແລະ ການນຳພາອັນສະຫລາດສ່ອງໃສຂອງພັກເຊິ່ງເປັນກອງນຳໜ້າຂອງຊົນຊັ້ນກຳມະກອນລາວທັງເປັນຕົວແທນທີ່ ແທ້ຈິງໃຫ້ແກ່ຜົນປະໂຫຍດຂອງປະຊາຊົນລາວທັງຊາດຮູ້ໝູນໃຊ້ລັດທິມາກ-ເລນິນ ເຂົ້າໃນພຶດຕິກຳຕົວຈິງ ຂອງການປະຕິວັດລາວຢ່າງປະດິດສ້າງ ແມ່ນໄຊຊະນະແຫ່ງມູນເຊື້ອຮັກຊາດ ຮັກສັງຄົມນິຍົມ ແລະ ຄວາມສາມັກຄີຕໍ່ສູ້ອັນອົງອາດກ້າຫານເດັດດ່ຽວ ແລະ ບໍ່ຍອມຈຳນົນ ການເສຍສະຫລະທຸກສິ່ງທຸກຢ່າງເພື່ອພາລະກິດປະຕິວັດຂອງພະນັກງານ, ທະຫານ ແລະ ປະຊາຊົນລາວເຮົາ, ມັນແມ່ນໄຊຊະນະສາມັກຄີຮ່ວມຮົບລະຫວ່າງ 3 ຊາດອິນດູຈີນ ພິເສດແມ່ນລະຫວ່າງລາວ-ຫວຽດນາມ, ມັນແມ່ນໝາກຜົນແຫ່ງການຊ່ວຍເຫລືອແບບສາກົນກຳມະຊີບ ຂອງສະຫະພາບໂຊວຽດ, ຂອງບັນດາປະເທດສັງຄົມນິຍົມອ້າຍນ້ອງແລະການສະໜັບສະໜູນຢ່າງແທ້ຈິງຂອປະຊາຊົນຜູ້ກ້າວໜ້າໃນໂລກ.

# ຂໍໂທດຫຼາຍໆ

ປື້ມຫົວດັ່ງກ່າວ ຍັງບໍ່ສາມາດນຳ
ມາເຜີຍແຜ່ໄດ້ ເນື່ອງຈາກຍັງບໍ່
ໄດ້ຮັບການອະນຸຍາດໃຫ້ເຜີຍແຜ່
ໄດ້ຢ່າງເປັນທາງການເທື່ອ...



ດ້ວຍຄວາມຮັກແພງ